# ກຳແພງໃຫຍ່ໃນເມືອງຈີນ

( ອ່ານພຣະທັມເພງສັຣເສີນ 33:8-32 )

---

ຄວາມຊອບທັມໃຫ້ກຽດແກ່ປະຊາຊາດ, ແຕ່ວ່າຄວາມບາບເປັນການສາບແຊ່ງແກ່ປະຊາຊົນ. ( ສຸພາສິດ 14:34 )

---

ພຣະຄຳພຣະເຈົ້າໃນພຣະທັມສຸພາສິດ 14:34 ສາມາດລົບລ້າງຄຳຈາລຶກຂອງຫຼາຍໆ ຊາດໄດ້ "ຄວາມຊອບທັມໃຫ້ກຽດແກ່ປະຊາຊາດ, ແຕ່ວ່າຄວາມບາບເປັນການສາບແຊ່ງແກ່ປະຊາຊົນ."

ພວກເຮົາຄິດວ່າພວກເຮົາສາມາດສ້າງຊາດ ຫຼືປ້ອງກັນຊາດດ້ວຍອາວຸດຍຸທພັນໄດ້ຖ້າມກາງຊາດອື່ນໆ ແຕ່ອົງພຣະຜູ້ເປັນເຈົ້າຊົງກ່າວວ່າ ປະເທດຊາດທັງຫຼາຍຕ້ອງສ້າງຂຶ້ນດ້ວຍບຸກຄະລິກຂອງປະຊາຊົນໃນປະເທດນັ້ນໆ

ຄົນຈີນໃນສມັຍບູຮານພະຍາຍາມສແວງຫາຄວາມປອດພັຍເພື່ອປ້ອງກັນຊົນກຸ່ມນຶ່ງທີ່ໂຫດຮ້າຍ ຊຶ່ງຈະຂ້າກວາດລ້າງບັນດາປະຊາຊົນຕັ້ງແຕ່ພາກເໜືອລົງມາຈົນເຖິງພາກໃຕ້. ດັ່ງນັ້ນເຂົາເຈົ້າຈຶ່ງພາກັນສ້າງກຳແພງຂນາດໃຫຍ່ຂຶ້ນ. ກຳແພງໃຫຍ່ອັນມະຫາສານນີ້ມີລວງຍາວເຖິງ 1,500 ໄມລ໌ ລວງກວ້າງ 12 ຫາ 40 ຟຸດ ແລະລວງສູງ 20 ຫາ 50 ຟຸດ. ກຳແພງນີ້ມີຄວາມສູງພຽງພໍທີ່ຈະປ້ອງກັນສັດຕຣູບໍ່ໃຫ້ຂ້າມໄດ້, ມີຄວາມໜາທີ່ສັດຕຣູບໍ່ສາມາດທຳລາຍໄດ້, ມີຄວາມຍາວຈົນສັດຕຣູບໍ່ສາມາດຍ່າງເວັ້ນໄປເຂົ້າອີກຂ້າງນຶ່ງໄດ້.

ແຕ່ເຖິງປານນັ້ນ ຫຼັງຈາກກຳແພງນັ້ນໄດ້ສ້າງຂຶ້ນເປັນເວລາ 100 ປີແລ້ວ ຍັງມີຜູ້ບຸກລຸກຜ່ານເຂົ້າໄປທາງໃນໄດ້ເຖິງ 3 ຄັ້ງ. ຄວາມປອດພັຍດັ່ງກ່າວນີ້ຣົ່ວຊຶມໄດ້ຢ່າງໃດ? ງ່າຍຫຼາຍ ! ພວກສັດຕຣູພຽງແຕ່ຍັດເງິນສິນບົນໃຫ້ຄົນຍາມປະຕູ ແລ້ວເຂົາເຈົ້າກໍສາມາດຍ່າງຜ່ານປະຕູກຳແພງເຂົ້າໄປທາງໃນຢ່າງສງ່າຜ່າເຜີຍ. ຈຸດອ່ອນທີ່ເປັນອັນຕະລາຍອັນໃຫຍ່ຫຼວງໃນການປ້ອງກັນປະເທດຄືການຫຸ້ມເທເງິນຄຳ, ເຫື່ອແຮງ, ແລະຄວາມອຸດົມຮັ່ງມີໃສ່ໃນການກໍ່ສ້າງກຳແພງ ແຕ່ວ່າບັນດາຜູ້ນຳ ຂາດການເອົາໃຈໃສ່ໃນການກໍ່ສ້າງບຸກຄະລິກ, ຄຸນສົມບັດຂອງຄົນຍາມປະຕູ

ເຖິງຈະມີລະບົບການປ້ອງກັນຊາດທີ່ດີທີ່ສຸດ, ແລະຍິ່ງໃຫຍ່ທີ່ສຸດກໍຈະບໍ່ສາມາດປ້ອງກັນຊາດຂອງເຮົາໄດ້. ແຕ່ເຖິງປານນັ້ນພວກເຮົາໄດ້ບໍຣິຈາກຊັບສິ່ງຂອງ, ແລະໃຫ້ຄວາມຮ່ວມໄມ້ຮ່ວມມືໃນການສ້າງລະບົບຄວາມປອດພັຍໂດຍບໍ່ມີການຕຳໜິ. ແຕ່ຜົນງານເຫຼົ່ານັ້ນກັບໄຮ້ປໂຍດ ເພາະວ່າເຮົາຢູ່ໃນຍຸກສມັຍທີ່ຂາດຄວາມສັດຊື່ ແລະບໍ່ເຮັດຕາມທາງອັນຊອບທັມ (ຟີລິບປອຍ 2:15 )

---

ຊາດຈະເຂັ້ມແຂງ ຍ້ອນປະຊາຊົນເປັນຄົນດີມີສິນທັມ

---

ຮຽບຮຽງຈາກ ອາວເດລີເບຣດ